ສະບັບທີ 01, ຊຸດທີ 01 (2026); 12- 21

ວາລະສານວິທະຍາສາດການເມືອງ-ການປົກຄອງ
www.jnappa.lci.la; ISSN: 3107-1163; E-ISSN: 3107-1171
DOI: https://doi.org/10.71026/jnappa.2026.010102



ການພັດທະນາ ແລະ ນຳໃຊ້ເຕັກໂນໂລຊີ ເຂົ້າໃນການພັດທະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

Technology Development and Application in National Development of Lao PDR

ສຸພາວະດີ ຫຼ້າຄຳສາຍ; ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ
E-mail: larkhamsai@yahoo.com

ປະຫວັດຫົວຂໍ້ຄົ້ນຄວ້າ

ໄດ້ຮັບ: 30 ພຶດສະພາ 2025
ໄດ້ຮັບພາຍຫຼັງປັບປຸງ: 10 ກັນຍາ 2025
ຖືກຮັບຮອງ: 28 ກັນຍາ 2025
ຈັດພິມອອນລາຍ: 03 ມີນາ 2026

ບົດຄັດຫຍໍ້

ໃນຍຸກສະໄໝປັດຈຸບັນ, ການນຳໃຊ້ເຕັກໂນໂລຊີທັນສະໄໝ ເປັນຕົ້ນແມ່ນເຕັກໂນໂລຊີອິນເຕີເນັດແຫ່ງສັບພະສິ່ງ (IoT), ການນຳໃຊ້ຂໍ້ມູນມະຫານສານ (Big Data), ກຸ່ມຂໍ້ມູນຜູກພັນ (Block chain), ປັນຍາປະດິດ (AI), ຫຸ່ນຍົນ, ພາຫະນະບໍ່ມີຄົນຂັບ, ເຕັກໂນໂລຊີຊີວະພາບ ແລະ ພັນທຸກຳ, ໂຮງງານອັດສະລິຍະ ແລະ ການສ້າງຕົວເມືອງອັດສະລິຍະ ໄດ້ຖືກນຳໃຊ້ນັບມື້ກວ້າງຂວາງ ຊຶ່ງໄດ້ນຳເອົາທັງກາລະໂອກາດ ແລະ ສິ່ງທ້າທາຍມາສູ່ມວນມະນຸດ ແລະ ສຳລັບ ສປປ ລາວ, ພັກຖືສຳຄັນການພັດທະນາວິທະຍາສາດ-ເຕັກໂນໂລຊີເພື່ອຂັບເຄື່ອນການພັດທະນາ ໂດຍໄດ້ຢືນຢັນວ່າ “ນຳໃຊ້ຜົນສຳ ເລັດດ້ານວິທະຍາສາດ-ເຕັກໂນໂລຊີ ເຂົ້າໃນການຜະລິດ, ການບໍລິ ການ ແລະ ການຄຸ້ມຄອງລັດ. ພ້ອມກັນນັ້ນ, ລັດຖະບານລາວ ກໍເອົາໃຈໃສ່ພັດທະນາຂະ ແໜງວິທະຍາສາດ-ເຕັກໂນໂລຊີຢ່າງຕັ້ງໜ້າ. ແຕ່ກໍ່ຍັງເຫັນວ່າ ການການພັດທະນາ ແລະ ນຳໃຊ້ເຕັກໂນໂລຊີ ເຂົ້າໃນການພັດທະນາລາວ ກໍ່ຍັງມີບາງດ້ານຈຳກັດ ທີ່ຕ້ອງໄດ້ແກ້ໄຂ ເຊັ່ນ: ຕ້ອງໄດ້ສ້າງ ແລະ ປັບປຸງນະໂຍບາຍ, ກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງ, ປັບປຸງ ແລະ ພັດທະນາໂຄງລ່າງພື້ນຖານເຕັກໂນໂລຊີ, ພັດທະນາຜະລິດຕະພັນ ແລະ ການບໍລິການດິຈິຕອນ, ພັດທະ ນາຊັບພະຍາກອນມະນຸດ ດ້ານເຕັກໂນໂລຊີ ໃຫ້ຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ ທັງໝົດແມ່ນເພື່ອ ເຮັດໃຫ້ຄຸນນະພາບຊີວິດການເປັນຢູ່ ຂອງປະຊາຊົນ ນັບມື້ນັບດີຂຶ້ນ.

ຄຳສັບສຳຄັນ: ເຕັກໂນໂລຊີ, ການພັດທະນາ, ການນຳໃຊ້ເຕັກໂນໂລຊີ.

Abstract

Currently the application of modern technology such as Internet of Things (IoT), Big Data, Block chain, Artificial Intelligence (AI), robotics, unmanned vehicles, biotechnology and genetic engineering, smart factories and smart cities, have been increased continuously, this brings both opportunities and challenges to humanity. In case of Lao PDR, the Party attaches and prioritizes the importance of science and technological development to drive national development by reaffirmed that “the usages of scientific and technological achievements in production, services and public management; and Lao government has actively paid attention to the development of the science and technology sectors. However, it is also seen that the development and application of technology in national development still has some limitations that need to be addressed quickly such as creating and improving relevant policies, laws and legislation, improving and developing technological infrastructure, developing digital products and services, developing human resources in technological sector to ensure quantity and quality, all in order to improve the quality of life of the people within the country.

Key words: Technology, Development, Technological Application.

1. ສະພາບການພັດທະນາເຕັກໂນໂລຊີ ຢູ່ໃນໂລກ ແລະ ຢູ່ ສປປ ລາວ.

1). ສະພາບການພັດທະນາເຕັກໂນໂລຊີ ຢູ່ໃນໂລກ.

ໂລກໄດ້ຮັບການປ່ຽນແປງຈາກສິ່ງປະດິດສ້າງທາງເຕັກໂນໂລຊີທີ່ປ່ຽນແປງຊີວິດ ຂອງບັນພະບຸລຸດຂອງພວກເຮົາ ແລະ ຊ່ວຍໃຫ້ພວກເຮົາມີຄວາມຈະເລີນຮຸ່ງເຮືອງ ແລະ ສ້າງອະນາຄົດທີ່ພວກເຮົາອາໄສຢູ່ໃນທຸກມື້ນີ້: ຈາກການສ້າງເຄື່ອງມືຫີນ ຫຼື ລໍ້ອັນທຳອິດໄປຈົນເຖິງເຄື່ອງຈັກ ແລະ ເຕັກໂນໂລຊີ ທີ່ເຄີຍປູທາງໄປສູ່ໂລກທີ່ທັນສະໄໝຍິ່ງຂຶ້ນ, ບັນຊີລາຍຊື່ນະວັດຕະກຳນັ້ນມີຢ່າງຫຼວງຫຼາຍ. ເຕັກໂນໂລຊີມີຄວາມສັບຊ້ອນ ແລະ ເຊື່ອມໂຍງກັນຫຼາຍຂຶ້ນເລື້ອຍໆ ເຊັ່ນ: ລົດ, ເຮືອ ບິນ, ອຸປະກອນການແພດ, ທຸລະກຳທາງດ້ານການເງິນ ແລະ ລະບົບໄຟຟ້າ ລ້ວນແຕ່ອາໄສຊັອບແວຄອມພິວເຕີຫຼາຍກວ່າທີ່ເຄີຍມີມາກ່ອນ ຊຶ່ງເຮັດໃຫ້ລະບົບຕ່າງໆເຂົ້າໃຈຍາກຂຶ້ນ ແລະ ໃນບາງກໍລະນີກໍ່ຄວບຄຸມໄດ້ຍາກຂຶ້ນ. ການຕິດຕາມ, ການດຸກຄະລາກອນ ແລະ ການປະມວນຜົນຂໍ້ມູນຂອງລັດຖະບານ ແລະ ອົງການຕ່າງໆ ສ່ວນຫຼາຍແມ່ນອາໄສເຕັກໂນໂລຊີດິຈິຕອນ ແລະ ປັນຍາປະດິດ. ເພາະສະນັ້ນ ຈຶ່ງມີການພົວພັນ ລະຫວ່າງ ມະນຸດກັບມະນຸດ ໜ້ອຍລົງກວ່າແຕ່ກ່ອນ. ຄວາມກ້າວໜ້າທາງວິສະວະກຳຊີວະພາບ ກຳລັງເປີດພື້ນທີ່ໃໝ່ສຳລັບຄຳຖາມທາງປັດຊະຍາ, ທາງດ້ານການເມືອງ ແລະ ເສດຖະກິດ ທີ່ທ້າທາຍກ່ຽວກັບຄວາມສຳພັນຂອງມະນຸດກັບທຳມະຊາດ. ນອກຈາກນັ້ນ, ການຄຸ້ມຄອງອຸປະກອນ ແລະລະບົບຂະໜາດໃຫຍ່ ແລະຂະໜາດນ້ອຍເຫຼົ່ານີ້ ແມ່ນໄດ້ເຮັດຜ່ານລະບົບຄລາວ (cloud) ຫຼາຍຂຶ້ນເລື້ອຍໆ ເຮັດໃຫ້ການຄວບຄຸມອຸປະກອນ ແລະ ລະບົບເຫຼົ່ານີ້ ຢູ່ຫ່າງໄກ ແລະ ຫ່າງໄກຈາກການຄວບຄຸມໂດຍກົງຂອງມະນຸດ ຫຼື ສັງຄົມ. ການສຶກສາວິທີການສ້າງເຕັກໂນໂລຊີຕ່າງໆ ເຊັ່ນ: ປັນຍາປະດິດ ຫຼື ອິນເຕີເນັດ ຂອງທຸກສັບພະສິ່ງ "ສາມາດອະທິບາຍໄດ້" ກາຍມາເປັນສາຂາການຄົ້ນຄວ້າສະເພາະຂອງຕົນເອງ ເພາະວ່າມັນຍາກທີ່ຈະເຂົ້າໃຈວິທີການເຮັດວຽກ ຫຼື ສິ່ງທີ່ຜິດພາດໃນເວລາທີ່ມີບາງສິ່ງບາງຢ່າງຜິດພາດ (University of California, 2025).

ຄວາມສັບຊ້ອນທີ່ເພີ່ມຂຶ້ນ ເຮັດໃຫ້ມັນຍາກກວ່າທີ່ເຄີຍມີມາ ແລະ ມີຄວາມຈຳເປັນຫຼາຍກວ່າ ທີ່ເຄີຍສຳລັບນັກວິຊາການທີ່ຈະສຶກສາເບິ່ງວ່າຄວາມກ້າວໜ້າຂອງເຕັກໂນໂລຊີ ໄດ້ປ່ຽນແປງຊີວິດໃນທົ່ວໂລກໃນທາງບວກ ຫຼື ທາງລົບແນວໃດ ແລະ ມີເຄື່ອງມືທາງດ້ານສັງຄົມ, ການເມືອງ ແລະ ທາງດ້ານກົດໝາຍ ອັນໃດແດ່ທີ່ຕ້ອງການເພື່ອຊ່ວຍກຳນົດທິດທາງການພັດທະນາ ແລະ ອອກແບບເຕັກໂນໂລຊີໃນທິດທາງທີ່ເປັນປະໂຫຍດ. ອັນນີ້ ເບິ່ງຄືວ່າເປັນວຽກທີ່ເປັນໄປບໍ່ໄດ້ ຍ້ອນຄວາມກ້າວໜ້າ ຂອງການປ່ຽນແປງທາງດ້ານເຕັກໂນໂລຊີຢ່າງໄວວາ ແລະ ຄວາມຮູ້ສຶກວ່າຄວາມກ້າວໜ້າຢ່າງຕໍ່ເນື່ອງຂອງມັນເປັນສິ່ງທີ່ຫຼີກລ່ຽງບໍ່ໄດ້, ແຕ່ຫຼາຍປະເທດໃນທົ່ວໂລກ ພຽງແຕ່ເລີ່ມຕົ້ນປະຕິບັດຂັ້ນຕອນທີ່ສຳຄັນ ຕໍ່ການຄວບຄຸມເຕັກໂນໂລຊີຄອມ ພິວເຕີ ແລະ ຍັງຢູ່ໃນຂະບວນການຄິດທົບທວນກົດລະບຽບຄຸ້ມຄອງການໄຫຼຂອງຂໍ້ມູນທົ່ວໂລກ ແລະ ການແລກປ່ຽນເຕັກໂນໂລຊີຂ້າມຊາຍແດນຢ່າງເອົາໃຈໃສ່. ສະຫາຍ ສີຈິ້ນຜິງ ເລຂາທິການໃຫຍ່, ປະ ທານປະເທດ ແຫ່ງ ສປ ຈີນ ໄດ້ກ່າວວ່າ: “ບໍ່ມີການຫັນເປັນຂໍ້ມູນຂ່າວສານກໍ່ບໍ່ອາດຫັນເປັນທັນສະໄໝ ແລະ ໃຫ້ການຫັນເປັນຂໍ້ມູນຂ່າວສານຂັບເຄື່ອນການຫັນເປັນທັນສະໄໝ” (ສະພາທິດສະດີສູນກາງພັກ , 2023, ໜ້າ 6). ສະນັ້ນ ຕ້ອງຂະຫຍາຍການນຳໃຊ້ເຕັກໂນໂລຊີດິຈິຕອນ ໃຫ້ກວ້າງຂວາງ ແລະ ມີປະສິດທິພາບສູງ ຈຶ່ງຈະນຳໄປສູ່ການ

ປ່ຽນແປງໄວ ແລະ ກ້າວສູ່ການພັດທະນາແບບກ້າວກະໂດດ ຂອງ ເສດຖະກິດ-ສັງ ຄົມ ແລະ ການປົກຄອງບໍລິຫານລັດ ເປັນຕົ້ນແມ່ນ ຕ້ອງນຳໃຊ້ເຕັກໂນໂລຊີປັນຍາປະດິດ (AI), ລະບົບສື່ສານຄວາມ ໄວສູງ, ອິນເຕີເນັດແຫ່ງສັບພະສິ່ງ (IoT), ລະບົບຂໍ້ມູນມະຫາສານ (Big Data), ລະບົບຄຣາວ (Cloud computing), ເຕັກໂນໂລຊີ ກຸ່ມຂໍ້ມູນຜູກພັນ (Block Chain), ກະເປົາເງິນເອເລັກ ໂຕຼນິກ ແລະ ເຕັກໂນໂລຊີການຊຳລະສະສາງແບບເອເລັກໂຕຼນິກ ທີ່ຈະເພີ່ມ ກຳລັງແຮງໃຫ້ປະຊາ ຊົນ ແລະ ຜູ້ປະກອບການໃນການສ້າງການ ໂອກາດໃໝ່, ການບໍລິ ການໃໝ່. ທັງໝົດນີ້ ຈະນຳໄປສູ່ການຫັນ ປະເທດເຮົາ ໃຫ້ເປັນປະເທດອຸດສາຫະກຳ ແລະ ທັນສະໄໝຢ່າງ ໜັກແໜ້ນ ຕາມແນວທາງທີ່ພັກວາງໄວ້.

ເຕັກໂນໂລຊີຂໍ້ມູນຂ່າວສານ ໂດຍສະເພາະເຕັກໂນໂລຊີດິຈິ ຕອນ ນັບມື້ມີບົດບາດສຳຄັນ ຕໍ່ການດຳລົງຊີວິດຂອງຄົນເຮົາ ກໍ່ຄື ການພັດທະນາປະເທດຊາດ ຊຶ່ງມັນໄດ້ສ້າງທັງການ ໂອກາດ ແລະ ສິ່ງທ້າທາຍຫຼາຍປະການ. ປັດຈຸບັນ ໄດ້ມີການນຳໃຊ້ເຕັກໂນໂລຊີດິ ຈິຕອນເຂົ້າໃນທຸກຂະແໜງການພາກລັດ, ຂະແໜງການຜະລິດ, ຂະ ແໜງສາທາ ລະນະສຸກ, ຂະແໜງສຶກສາ, ຂະແໜງການຄ້າ ແລະ ທຸລະກິດຂະໜາດກາງ, ຂະໜາດນ້ອຍ ແລະ ທຸລະກິດປະເພດສະ ຕາດອັບ (ເລີ່ມຕົ້ນ) ສາມາດນຳໃຊ້ເຕັກໂນໂລຊີດິຈິຕອນ ເປັນ ເຄື່ອງມືໃນການສ້າງນະວັດຕະກຳໃໝ່ ປະກອບສ່ວນເຂົ້າໃນການຍົກ ສູງປະສິດທິພາບ ແລະ ປະສິດທິຜົນ ຊຶ່ງເຮັດໃຫ້ມີການປ່ຽນແປງ ຫຼື ຜົນກະທົບທາງດ້ານນະວັດຕະກຳຢ່າງວ່ອງໄວ. ພ້ອມກັນນັ້ນ ເຕັກ ໂນໂລຊີດິຈິຕອນສາ ມາດຫຼຸດຜ່ອນຄວາມຫຼຸດໂຕນກັນ ລະຫວ່າງ ຕົວເມືອງ ແລະ ຊົນນະ ບົດ ໂດຍເຮັດໃຫ້ຫຍັບມໍ່ເຂົ້າຫາກັນຫຼາຍ ຂຶ້ນ, ເຮັດໃຫ້ການຜະລິດ, ການຄ້າມີການຂະຫຍາຍຕົວ ຍ້ອນມີ ການແບ່ງປັນຂໍ້ ມູນທີ່ ຈຳເປັນ ໄດ້ ໄວ. ສະຫະພາບ ໂທ ລະ ຄົມມະນາຄົມສາກົນ (ITU) ໄດ້ປະເມີນວ່າ ຖ້າການນຳໃຊ້ລະ ບົບ ສື່ສານອິນເຕີເນັດຄວາມໄວສູງ ເພີ່ມຂຶ້ນ 10% ຈະສົ່ງຜົນເຮັດໃຫ້ ເສດຖະກິດຂະຫຍາຍຕົວ 1,38% (ກະຊວງເຕັກໂນໂລຊີ ແລະ ການສື່ສານ, 2021, ໜ້າ 5).

2). ສະພາບການພັດທະນາເຕັກໂນໂລຊີ ຢຸ່ ສປປ ລາວ.

ໂດຍພື້ນຖານແລ້ວ, ສປປ ລາວ ໄດ້ເລີ່ມນຳໃຊ້ເຕັກໂນໂລຊີ ແຕ່ຊຸມປີ 1980 ເປັນຕົ້ນມາ, ເລີ່ມແຕ່ປີ 1996 ໄດ້ມີການເລີ່ມທົດ ລອງນຳໃຊ້ ແລະ ສົ່ງເສີມອີເມວຜ່ານລະບົບເຄືອຂ່າຍອິນເຕີເນັດ. ປະຕິບັດຕາມແນວທາງນະໂຍບາຍຂອງພັກ ໃນການຫັນເປັນ ອຸດສາຫະກຳ ແລະ ທັນສະໄໝ. ໃນກອງປະຊຸມ ຄັ້ງທີ VIII ຂອງ ພັກ ໄດ້ບັນຈຸເອົາໂຄງ ການສ້າງລະບົບການບໍລິຫານລັດ ແບບເອ ເລັກໂຕຼນິກ ເຂົ້າໃນ 111 ໂຄງການບຸລິມະສິດ. ໃນປີ 2005 ອົງການ ວິທະຍາສາດ ແລະ ເຕັກໂນໂລຊີແຫ່ງຊາດ ໃນຖານະເປັນເສນາທິການ ໃຫ້ແກ່ລັດຖະບານໃນການຄຸ້ມຄອງ, ຄົ້ນຄວ້າ ແລະ ພັດທະນາເຕັກ ໂນໂລຊີຂໍ້ມູນຂ່າວສານ ຈຶ່ງໄດ້ສ້າງວິໄສທັດໃນການພັດທະນາລະບົບ ການບໍລິຫານລັດ ແບບເອເລັກ ໂຕຼນິກ ຂອງ ສປປ ລາວ (Lao e-Government Roadmap) ໂດຍໄດ້ຮັບການຊ່ວຍເຫຼືອຈາກ ລັດຖະບານປະເທດເກົາຫຼີ. ຈາກນັ້ນ ໃນປີ2006 ກໍ່ໄດ້ສ້າງແຜນ ປະຕິບັດງານ ລະບົບການບໍລິຫານລັດແບບເອເລັກໂຕຣນິກ (Lao e-Government Action Plan) ໂດຍໄດ້ຮັບການຊ່ວຍເຫຼືອຈາກ ລັດຖະບານອິນເດຍ. ໃນເດືອນກັນຍາ 2006 ລັດ ຖະບານ ໄດ້ ຮັບຮອງແຜນປະຕິບັດງານດັ່ງກ່າວ, ພ້ອມກັນນັ້ນລັດຖະ ບານ ກໍ ມອບໝາຍໃຫ້ອົງການວິທະຍາສາດ ແລະ ເຕັກໂນໂລຊີ (ອວຕ ຊ) ຮ່ວມມືກັບບໍລິສັດອາຄາເທວ ຊຽງໄຮ ສ້າງລະບົບການບໍລິຫານລັດ ແບບເອເລັກໂຕຼນິກ ແລະ ອະນຸຍາດໃຫ້ຈັດຕັ້ງປະຕິບັດ ໃນເດືອນ ພະຈິກ 2006 ໂດຍໄດ້ຮັບການຊ່ວຍເຫຼືອຈາກລັດຖະບານ ສປ ຈີນ.

ນັບແຕ່ປີ 2006 ເປັນຕົ້ນມາ, ເຕັກໂນໂລຊີຂໍ້ມູນຂ່າວສານ ຂອງ ສປປ ລາວ ກໍ່ໄດ້ຮັບການປັບປຸງ, ພັດທະນາໃຫ້ເຕີບໃຫຍ່ຂະ ຫຍາຍຕົວ ຕອບສະໜອງຄວາມຮຽກຮ້ອງຕ້ອງການ ຂອງການ ຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ. ທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່, ປະທານປະເທດ ແຫ່ງ ສປປ ລາວ ໄດ້ເນັ້ນໜັກວ່າ: “ເຕັກໂນໂລຊີດິຈິຕອນ ເປັນກຳລັງຂັບເຄື່ອນ ຕົ້ນຕໍ ຂອງການຫັນເປັນດິຈິຕອນຢຸ່ປະເທດເຮົາ” (ສີສຸລິດ, ທ., 2022, ໜ້າ 3). ເພື່ອເຮັດໃຫ້ການພັດທະນາເຕັກໂນໂລຊີມີບາດ ກ້າວ ຫັນປ່ຽນໃໝ່ ໂດຍສະເພາະແມ່ນເພື່ອເຮັດໃຫ້ການຫັນເປັນດິຈິຕອນ ຂອງລາວມີຜົນສຳເລັດ, ສະພາແຫ່ງຊາດ ໄດ້ຮັບຮອງເອົາວິໄສທັດ, ຍຸດທະສາດ ແລະ ແຜນພັດທະ ນາເສດຖະກິດດິຈິຕອນແຫ່ງຊາດ ໃນ ທ້າຍປີ 2021 ເປັນຕົ້ນມາ; ໃນການຈັດຕັ້ງປະຕິບັດການຫັນເປັນດິຈິ ຕອນ ໃນໄລຍະຜ່ານມາ, ລັດຖະບານ ກໍ່ໄດ້ອອກດຳລັດສະບັບ 367/ ລບ ລົງວັນທີ 12 ທັນວາ 2022 ວ່າດ້ວຍການຮັບຮອງ ແລະ ປະກາດ ໃຊ້ວິໄສທັດການພັດທະນາເສດຖະກິດດິຈິຕອນແຫ່ງຊາດ ໄລຍະ 20 ປີ (2021-2040), ຍຸດທະສາດການພັດທະນາເສດຖະກິດດິຈິຕອນ ແຫ່ງຊາດ ໄລຍະ 10 ປີ (2021-2030) ແລະ ແຜນພັດທະນາ ເສດຖະກິດດິຈິຕອນແຫ່ງຊາດ ໄລຍະ 5 ປີ (2021-2025) ຊຶ່ງໄດ້ ມອບໃຫ້ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນເຈົ້າການປະສານ ສົມທົບກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການ

ປົກຄອງທ້ອງຖິ່ນ ແລະພາກ ສ່ວນຕ່າງໆທີ່ກ່ຽວ ຂ້ອງ ຈັດຕັ້ງຜັນ ຂະຫຍາຍວິໄສທັດ, ຍຸດທະສາດ ແລະ ແຜນພັດທະ ນາ ເສດຖະກິດດິຈິຕອນດັ່ງກ່າວ.

ຕະຫຼອດໄລຍະຜ່ານມາ, ລັດຖະບານແຫ່ງ ສປປ ລາວ ໄດ້ ເອົາ ໃຈໃສ່ປັບປຸງ, ພັດທະນາເຕັກໂນໂລຊີຂໍ້ມູນຂ່າວສານໃຫ້ທັນ ສະໄໝ. ປັດຈຸບັນ, ສປປ ລາວ ຍັງມີສະຖານີດາວທຽມຂອງຕົນເອງ ເພື່ອສົ່ງ ແລະ ຮັບສັນຍານຢູ່ 37 ປະເທດໃນທົ່ວໂລກ. ນອກນັ້ນ, ແຜນຍຸດທະສາດເສດຖະກິດດິຈິຕອນຂອງຕົນ ກໍ່ໄດ້ຮັບການ ປະຕິບັດຢ່າງມີໝາກຜົນຕົວຈິງ. ປີ 2022 ສປປ ລາວ ມີສາຍໃຍ ແກ້ວທັງໝົດຫຼາຍກວ່າ 90 ພັນກິໂລແມັດ ຊຶ່ງກວມເອົາເມືອງ ແລະ ແຂວງໃນທົ່ວປະເທດ, ສະຖານີຮັບ-ສົ່ງສັນຍານໂທລະສັບມືຖື ທັງ ໝົດມີ 9.680 ສະຖານີ. ໃນນັ້ນ ມີ 2G ກວມ 98%, 3G ກວມ 81% ແລະ 4G ກວມ 53% ຂອງຈຳນວນບ້ານທົ່ວປະເທດ. ການ ຂະຫຍາຍເຄືອຂ່າຍອິນເຕີເນັດຄວາມໄວສູງຜ່ານໂທລະສັບມືຖື 3G ກວມ 82% ແລະ 4G ກວມ 53% ແລະ ເລີ່ມທົດລອງອິນເຕີເນັດ ຄວາມໄວສູງຜ່ານໂທລະສັບມືຖື 5G ຢູ່ນະຄອນຫຼວງວຽງຈັນ. ສຳ ລັບການນຳໃຊ້ລະບົບດິຈິຕອນ ຢູ່ ສປປ ລາວ ໃນຕົ້ນປີ 2023, ປະຊາກອນຂອງ ສປປ ລາວ ມີທັງໝົດ 7.58 ລ້ານຄົນ, ມີຜູ້ນຳໃຊ້ ອິນເຕີເນັດ 4.70 ລ້ານຄົນ, ອັດຕາເຂົ້າເຖິງອິນເຕີເນັດແມ່ນ 62% ຂອງປະຊາກອນ; ຜູ້ໃຊ້ສື່ສັງຄົມອອນລາຍ 3.35 ລ້ານຄົນ ເທົ່າກັບ 44.2% ຂອງປະຊາ ກອນ (ສະພາທິດສະດີສູນກາງພັກ, 2023, ໜ້າ 31).

ປັດຈຸບັນ ໄດ້ເລີ່ມປະຕິບັດໂຄງການສະໜັບສະໜູນສ້າງ ສວນອຸທິຍານດິຈິຕອນ (Digital Park) ຊຶ່ງເປັນການຍົກລະດັບ ໃຫ້ຜູ້ປະ ກອບການດ້ານ ໄອທີ (IT) ແລະ ສະຕາດອັບ (Startup) ຂອງ ສປປ ລາວ ໃຫ້ມີຄວາມພ້ອມໃນຍຸກອຸດສາຫະກຳ 4.0. ພ້ອມ ກັນນັ້ນ ກໍ່ໄດ້ປັບປຸງໂຄງລ່າງພື້ນຖານສູນຂໍ້ມູນດິຈິຕອນ (Data Center) ຮອງຮັບລະບົບຄລາວ (Cloud) ເພື່ອສ້າງສະພາບແວດ ລ້ອມການຫັນເປັນດິຈິຕອນ ກໍ່ຄືການພັດທະນາເສດຖະກິດດິຈິ ຕອນ ຂອງ ສປປ ລາວ, ພ້ອມທັງຂະຫຍາຍພື້ນທີ່ໃຫ້ບໍລິການອິນເຕີ ເນັດ ເພື່ອສົ່ງເສີມການເຂົ້າເຖິງຂໍ້ມູນຂ່າວສານ ຂອງສັງຄົມດິຈິຕອນ (Digital Society).

ເພື່ອພັດທະນາເສດຖະກິດດິຈິຕອນ, ໄດ້ສ້າງລະບົບໂລຈິສ ຕິກ ເພື່ອສົ່ງເສີມໃຫ້ມີການເປີດກວ້າງທຸລະກິດການບໍລິການ ໂລຈິສ ຕິກ ແລະ ໄປສະນີ. ປີ 2022 ມີຜູ້ປະກອບການ 43 ບໍລິສັດ. ນອກຈາກນັ້ນ ໄດ້ສ້າງລະບົບຊຳລະດ້ວຍດິຈິຕອນ, ໄດ້ພັດທະນາພື້ນ ຖານໂຄງລ່າງການ ຊຳລະ, ລະບົບການຊຳລະ ແລະການໃຫ້ບໍລິການ ຊຳລະຂອງ ສປປ ລາວ ໃຫ້ໄດ້ມາດຕະຖານສາກົນ ສາມາດເຊື່ອມໃຊ້ ຮ່ວມກັນທັງພາຍໃນ, ພາກພື້ນ ແລະ ສາກົນ ເພື່ອກ້າວສູ່ການຊຳລະດິ ຈິຕອນ; ໄດ້ສຳເລັດການຊຸກຍູ້, ສົ່ງເສີມບໍລິສັດໂທລະຄົມມະນາຄົມ ຂະຫຍາຍການນຳໃຊ້ລະບົບຊຳລະສະສາງຜ່ານໂທລະສັບມືຖື (Mobile Money); ໄດ້ຮ່ວມມືກັບກະຊວງການເງິນປັບປຸງ, ພັດທະນາ ແລະ ນຳໃຊ້ລະບົບຄຸ້ມຄອງການເງິນແບບດິຈິຕອນ; ທະນາຄານໄດ້ປັບປຸງ ແລະ ຂະຫຍາຍປະເພດການບໍລິການລະບົບ ຊຳລະສະສາງຍ່ອຍ; ໄດ້ສຶກສາຄົ້ນຄວ້າສະກຸນເງິນ ດິຈິຕອນຂອງຊາດ (Central Bank Digital Currency - CBDC), ສູ ນ ແ ລ ັ ບ ເ ນ ັ ດ (LapNet) ໃຫ້ບໍລິການການເຊື່ອມຕໍ່ລະຫວ່າງທະນາ ຄານທຸລະກິດ ພາຍໃນ ໃນການເຮັດທຸລະກຳ; ກະຊວງການເງິນ ໄດ້ເປີດນຳໃຊ້ລະບົບ ການຊຳລະສະສາງລວມສູນ (FINLINK).

ລັດຖະບານ ໄດ້ພັດທະນາ ແລະ ສົ່ງເສີມການບໍລິຫານລັດ ດ້ວຍເອເລັກໂຕຼນິກ ເຂົ້າໃນທຸກຂະແໜງການ, ອົງການຈັດຕັ້ງລັດທັງ ສູນກາງ ແລະທ້ອງຖິ່ນ ເພື່ອໃຫ້ບັນລຸປັດໄຈພື້ນຖານກຽມຄວາມພ້ອມ ກ້າວໄປສູ່ລັດຖະບານທີ່ທັນສະໄໝ ແລະ ສັງຄົມດິຈິຕອນ ໄດ້ສຳເລັດ ການຕິດຕັ້ງເຊື່ອມໂຍງເຄືອຂ່າຍອິນເຕີເນັດພາກລັດ ແຕ່ສູນກາງຫາ ທ້ອງຖິ່ນ; ໄດ້ຕິດຕັ້ງເຄືອຂ່າຍອິນເຕີເນັດເຊື່ອມໂຍງຫ້ອງ ການກະຊວງ ເຕັກໂນໂລຊີ ແລະ ການສື່ສານ ເພື່ອເປັນພື້ນຖານໃຫ້ແກ່ການສ້າງເປັນ ກະຊວງທັນສະໄໝ (Smart Ministry); ພ້ອມທັງດຳເນີນການປະ ເມີນຄວາມພ້ອມ ຂອງລັດຖະບານດິຈິຕອນ ດ້ວຍຕົວຊີ້ວັດ ຂອງ ອົງການສະຫະປະຊາຊາດ (UNDP). ພ້ອມກັນນັ້ນ, ໄດ້ສຳເລັດການ ຕິດຕັ້ງລະບົບຫ້ອງການທັນສະໄໝ ຂອງພາກລັດ ໂດຍຕິດຕັ້ງ ແລະ ນຳໃຊ້ລະບົບກອງປະຊຸມທາງໄກ (Video Conference) ໃຫ້ກັບ ບັນດາກະຊວງ, ອົງການ ທັງສູນກາງ ແລະ ທ້ອງຖິ່ນໄດ້ 194 ພາກສ່ວນ; ໄດ້ນຳໃຊ້ລະບົບການສື່ສານພາກລັດ (G-Chat), (ລະບົບຈັດເກັບ ແລະ ນຳໃຊ້ເອກະສານຮ່ວມກັນຂອງພາກລັດ (G-Share/G-Drive); ປັບປຸງ ແລະ ພັດທະນາລະບົບເວັບໄຊຂອງພາກ ລັດ (G-Web v2 Platform). ພ້ອມກັນນັ້ນ ກໍ່ໄດ້ຄົ້ນຄວ້າແຜນ ໂຄງການລັດຖະບານດິຈິຕອນ (Digital Govern ment Index), ພ້ອມທັງສ້າງ ແລະ ພັດທະນາລະບົບ Laopedia, L-MOOC, Supper App (ໂຄງການ ຂອງອົງການສະຫະປະຊາຊາດ UNDP RFF).

2. ການນຳໃຊ້ເຕັກໂນໂລຊີເຂົ້າໃນການພັດທະນາ ສປປ ລາວ.

1). ການນຳໃຊ້ເຕັກໂນໂລຊີ ເຂົ້າໃນການບໍລິຫານລັດ: ແມ່ນ

ການພັດທະນາລະບົບເຊື່ອມໂຍງຂໍ້ມູນພາກລັດ ເພື່ອການບໍລິຫານລັດ ໃຫ້ເປັນເອກະພາບ ມີ 18 ກະຊວງຢູ່ສູນກາງ 18 ແຂວງ/ນະຄອນຫຼວງ ສາມາດເຊື່ອມໂຍງບັນດາອົງການຈັດຕັ້ງພາກລັດ ທັງສູນກາງ ແລະ ທ້ອງຖິ່ນ ໄດ້ຈຳນວນ 36 ຫ້ອງການ, ສາມາດເຊື່ອມໂຍງເຂົ້າຫາລະບົບລັດຖະບານດິຈິຕອນ ເຊັ່ນ: ລະບົບກອງປະຊຸມທາງໄກ, ລະບົບຂໍ້ມູນພາກລັດ ແລະ ລະບົບຫ້ອງການທັນສະໄໝ ໄດ້ສະດວກ ແລະ ປອດໄພ.

ສະເພາະຫ້ອງປະຊຸມທາງໄກ (Video Conference), ສາມາດຂະຫຍາຍໄດ້ 97 ພາກສ່ວນ (ກວມ 43% ຂອງແຜນການ 5 ປີ) ແລະ ສາມາດສ້າງບັນຊີຜູ້ຊົມໃຊ້ໄດ້ 739 ບັນຊີ.

ລະບົບອີເມວ (E-mail) ຂອງລັດຖະບານຂະຫຍາຍໄດ້ 41 ພາກສ່ວນ ຫຼື 60.29% ຂອງແຜນການ 5 ປີ, ມີບັນຊີຊົມໃຊ້ທັງໝົດ 4,403 ລາຍຊື່. ມີຫ້ອງການທັນສະໄໝ 27 ຫ້ອງການຢູ່ສູນກາງ ກວມ 65% ຂອງແຜນການ 5 ປີ ແລະ ຢູ່ທ້ອງຖິ່ນ 17 ຫ້ອງວ່າການແຂວງ.

ມີບັນຊີລະບົບສື່ສານພາກລັດ (G-Chat) ທັງໝົດ 15,000 ບັນຊີ ຫຼື 30% ຂອງແຜນການ 5 ປີ, ຂະຫຍາຍການນຳໃຊ້ໄດ້ 14,033 ລາຍຊື່, ໃນນັ້ນ ສູນກາງ 8,410 ບັນຊີ ແລະ ທ້ອງຖິ່ນ 5,623 ບັນຊີ.

ລະບົບເກັບກຳເອກະສານພາກລັດທັງສູນກາງ ແລະ ທ້ອງຖິ່ນ (G-Drive, G-Share) ໄດ້ 5,138 ບັນຊີ, ໃນນັ້ນ ສູນກາງ 3,717 ບັນຊີ ແລະ ທ້ອງຖິ່ນ 1,422 ບັນຊີ ແລະສາມາດຮອງຮັບແລ້ວ 16,000 ບັນຊີ ເທົ່າກັບ 32% ຂອງແຜນການ 5 ປີ.

ມີລະບົບເວບໄຊ ຂອງລັດຖະບານ 33 ພາກສ່ວນ ກວມ 73.33% ຂອງແຜນການ 5 ປີ, ຂະຫຍາຍການບໍລິການຮັບຝາກເວັບໄຊ ໄດ້ 200 ເວັບໄຊ; ເປີດລະຫັດຊື່ອິນເຕີເນັດເປັນພາສາລາວໄດ້ເຖິງ 52,000 ກ່ວາໂດເມນ; ມີສູນບໍລິການຂໍ້ມູນແບບເອເລັກໂຕຼນິກ ແລະ ຂະຫຍາຍພື້ນທີ່ຈັດເກັບຂໍ້ມູນຂອງລະບົບຄລາວ ຈຳນວນ 45 TB.

ພັດທະນາ ແລະ ສາມາດຮອງຮັບລະບົບລາຍເຊັນເອເລັກໂຕຣນິກແຫ່ງຊາດ ແລະ ນຳໃຊ້ເຂົ້າໃນຫ້ອງການທັນສະໄໝ, ໃນນັ້ນ ຮູບແບບ USB Token 73 ອັນ ແລະ ຮູບແບບ Softkey 509 ໃບ ຮອງຮັບ.

ສັງລວມແລ້ວ, ການນຳໃຊ້ເຕັກໂນໂລຊີ ເຂົ້າໃນການບໍລິຫານລັດ ແມ່ນໄດ້ຮັບການພັດທະນາຢ່າງບໍ່ຢຸດຢັ້ງ, ພື້ນຖານໂຄງລ່າງເຕັກໂນໂລຊີ ແລະ ການສື່ສານໄດ້ຮັບການພັດທະນາ ແລະ ປັບປຸງຫຼາຍຂຶ້ນ ພົ້ນເດັ່ນແມ່ນດ້ານໂທລະຄົມມະນາຄົມ, ເລກໝາຍໂທລະຄົມ, ສາຍສົ່ງໂທລະຄົມ, ຈານດາວທຽມ, ຕາໜ່າງໄປສະນີ, ວິທະຍຸສື່ສານ ໄດ້ຖືກຫັນເປັນລະບົບທັນສະໄໝເທື່ອລະກ້າວ. ເມື່ອທຽບເປັນມູນຄ່າທາງເສດຖະກິດ, ຂົງເຂດເຕັກໂນໂລຊີ ແລະ ການສື່ສານສາມາດສ້າງລາຍຮັບທາງກົງ ແລະ ທາງອ້ອມໃຫ້ແກ່ງົບປະມານ ໄດ້ເຖິງ 11,222.19 ຕື້ກີບ ຫຼື ກວມເອົາ 75% ຂອງແຜນການ 5 ປີ (2021-2025) (ກະຊວງແຜນການ ແລະ ການລົງທຶນ, 2021, ໜ້າ 7-8).

2). ການນຳໃຊ້ເຕັກໂນໂລຊີເຂົ້າໃນຂົງເຂດວຽກງານການເງິນ: ສະເພາະການຄຸ້ມຄອງງົບປະມານ ຕາມທິດທັນເປັນທັນສະໄໝໃນໄລຍະຜ່ານມາ ສາມາດສັງລວມຜົນສຳເລັດຂອງ 3 ລະບົບຄຸ້ມຄອງ ຄື: ລະບົບຄຸ້ມຄອງລາຍຮັບ-ລາຍຈ່າຍການເງິນແຫ່ງລັດ ຫຼື GFPS; ລະບົບຄຸ້ມຄອງການແຈ້ງມອບອາກອນ ຂອງຫ້ວໜ່ວຍວິສາຫະກິດ ຫຼື GMISC ແລະ ເຄື່ອງມືລະບົບແຈ້ງພາສີອາກອນທີ່ເປັນພັນທະພາສີ-ອາກອນນຳເຂົ້າ ທັງສາມາດສັງລວມສະຖິຕິ ແລະ ສັງລວມລາຍຮັບ ຫຼື C2000 (ນຳໃຊ້ມາແຕ່ປີ 2000). ທັງ 3 ລະບົບໄດ້ຖືກນຳໃຊ້ຢູ່ໃນ 5 ຂົງເຂດຫຼັກ ຂອງວຽກງານການເງິນຄື:

ໜຶ່ງ, ຂົງເຂດລາຍຈ່າຍ. ແມ່ນນຳໃຊ້ລະບົບ GFPS ເປັນລະບົບທີ່ສົມບູນ ໄດ້ຖືກນຳໃຊ້ຢູ່ທັງສູນກາງ ແລະທ້ອງຖິ່ນໃນຂອບເຂດທົ່ວປະເທດ ເຊິ່ງແມ່ນຄັງເງິນແຫ່ງຊາດເປັນຜູ້ນຳໃຊ້ ເພື່ອເບີກຈ່າຍງົບປະມານຄັງເງິນແຫ່ງຊາດ ໂດຍການເຊື່ອມຂໍ້ມູນທາງການເງິນຜ່ານລະບົບ Hardisk ກັບ 5 ທະນາຄານທຸລະກິດໃນປະເທດ ມີ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ BCEL, ທະນາ ຄານ ພັດທະນາລາວ, ທະນາຄານທຸລະກິດອີກ 3 ແຫ່ງ, ຮັບຮູ້ກັນໃນຊື່ Smart Tax. ນອກຈາກນີ້, ລະບົບ Smart Tax ຍັງຕິດພັນກັບ ການຊຳລະພາສີ-ອາກອນຜ່ານດ່ານ, ລະບົບ EasyTax ທີ່ເຊື່ອມຈອດ 5 ທະນາຄານທີ່ກ່າວມາຂ້າງເທິງ.

ສອງ, ຂົງເຂດລາຍຮັບ. ໄດ້ນຳໃຊ້ລະບົບຂໍ້ມູນຂ່າວສານການຄຸ້ມຄອງສ່ວຍສາອາກອນ ທີ່ຮູ້ກັນດີໃນຊື່ Tax RIS. ລະບົບດັ່ງກ່າວ ໄດ້ຮັບການພັດທະນາ ແລະ ເລີ່ມໃຊ້ງານມາແຕ່ປີ 2018 ເປັນຕົ້ນມາ ໂດຍເລີ່ມເປີດທົດລອງໃຊ້ຢູ່ກົມສ່ວຍສາອາກອນ ກະຊວງການເງິນ ກ່ອນ, ຫຼັງຈາກນັ້ນ ຈຶ່ງຂະຫຍາຍການນຳໃຊ້ໄປແຕ່ລະແຂວງ. ມາ ຮອດປັດຈຸບັນ ມີການນຳໃຊ້ຢູ່ 17 ແຂວງ, 47 ເມືອງ ແລະ 3 ນະຄອນ ໃນຂອບເຂດທົ່ວປະເທດ.

ສາມ, ລະບົບການແຈ້ງພາສີ, ຮັບຮູ້ໃນຊື່ ASYCUDA ເປັນການພັດທະນາໂດຍອົງການສະຫະປະຊາຊາດ ເພື່ອນຳໃຊ້ເຂົ້າໃນການແຈ້ງພາສີ-ອາກອນເປັນລາຍລະອຽດ ຜ່ານລະບົບ Electronic ຂອງ

ຂະແໜງພາສີ, ເປັນໂປຣແກຣມທີ່ໄດ້ມາດຕະຖານສາກົນ, ສ້າງຄວາມສະດວກ ແລະ ວ່ອງໄວໃນການແຈ້ງພາສີຜ່ານດ່ານ.

ສີ່, ລະບົບເຊື່ອມຈອດປະຕູດຽວອາຊຽນ ASEAN Single Window, ເປັນລະບົບທີ່ພັດທະນາຂຶ້ນ ເພື່ອສ້າງເງື່ອນໄຂໃຫ້ແກ່ການຈັດຕັ້ງປະຕິບັດວຽກງານສະມາຄົມເສດຖະກິດ ຂອງອາຊຽນ ຫຼື AEC ຂອງກະຊວງຕ່າງໆ.

ຫ້າ, ລະບົບຈັດເກັບຄ່າທຳນຽມທາງ, ອາກອນທີ່ດິນ ທີ່ກົມສ່ວຍສາອາກອນໄດ້ພັດທະນາຮ່ວມກັບທະນາຄານການຄ້າຕ່າງປະເທດລາວມະຫາຊົນ ແລະ ທະນາຄານພັດທະນາລາວ ເພື່ອອຳນວຍຄວາມສະດວກໃຫ້ແກ່ເຈົ້າຂອງພາຫະນະ ແລະ ເຈົ້າຂອງສິດນຳໃຊ້ທີ່ດິນ ສາ ມາດນຳໃຊ້ມືຖືເຂົ້າໃນການແຈ້ງເສຍຜ່ານທະນາຄານໄດ້ຢ່າງສະດວກ ແລະ ວ່ອງໄວ.

ນອກຈາກຊຸດຄຳສັ່ງທີ່ກ່າວມາຂ້າງເທິງນັ້ນ, ລະບົບທັນສະໄໝໃນການເກັບລາຍຮັບ ຍັງປະກອບມີບັນດາເຄື່ອງມືທີ່ໄດ້ຮັບການພັດທະນາ ເພື່ອອຳນວຍຄວາມສະດວກໃຫ້ແກ່ການເຂົ້າເຖິງຂໍ້ມູນ ເຊິ່ງແມ່ນຊຸດເຄື່ອງມືທາງອອນລາຍທີ່ສ້າງເປັນ Website ສະເພາະ ທີ່ທຸກຄົນສາມາດເຂົ້າເຖິງໄດ້ຢ່າງວ່ອງໄວ, ຍັງມີ QR Code ໃຫ້ສະແກນເພື່ອສະດວກໃນການເຂົ້າເຖິງຂໍ້ມູນຕ່າງໆກ່ຽວກັບການຄິດໄລ່, ປະຕິທິນມື້ແຈ້ງມອບ ແລະວິທີແຈ້ງມອບອາກອນຕື່ມອີກ. ນັບແຕ່ປີ 2019, ກະຊວງການເງິນໄດ້ຈັດຕັ້ງປະຕິບັດການເກັບຄ່າທຳນຽມທາງຜ່ານ BCEL One ຂອງທະນາຄານການຄ້າຕ່າງປະເທດ ໄດ້ 90 ກວ່າຕື້ກີບ ຊຶ່ງໃນປີ 2017 ເກັບໄດ້ພຽງ 25 ກວ່າຕື້ກີບ.

ເຖິງແນວໃດກໍ່ຕາມ, ເຖິງວ່າໄດ້ເອົາໃຈໃສ່ພັດທະນາ ແລະ ນຳໃຊ້ເຕັກໂນໂລຊີເຂົ້າໃນການພັດທະນາປະເທດຊາດ ເຮັດໃຫ້ເສດຖະ ກິດ - ສັງຄົມ ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ຊີວິດການເປັນຢູ່ ຂອງປະຊາຊົນ ໄດ້ຮັບປັບປຸງດີຂຶ້ນ, ການບໍລິຫານລັດມີປະສິດທິພາບສູງຂຶ້ນ, ແຕ່ກໍ່ຍັງມີບາງດ້ານຈຳກັດ ຫຼື ເປັນສິ່ງທ້າທາຍ ສຳລັບ ສປປ ລາວ ຄື:

1). ລະດັບການຫັນເປັນດິຈິຕອນ ຂອງ ສປປ ລາວ ຍັງບໍ່ທັນສູງ, ບໍ່ທັນມີນິຕິກຳທີ່ພຽງພໍ ແລະ ຮັດກຸມ ເຊິ່ງເປັນສິ່ງທ້າທາຍ ແລະເປັນອຸປະສັກໃຫ້ແກ່ການຈັດຕັ້ງປະຕິບັດຕົວຈິງ. ນອກຈາກນັ້ນ , ການສ້າງສະພາບແວດລ້ອມໃນການລົງທຶນໃນດ້ານໄອຊີທີ ຍັງບໍ່ທັນເປັນທີ່ສົນໃຈ ຂອງນັກລົງທຶນຕ່າງປະເທດ, ຮູບແບບຜູ້ປະກອບການໄອຊີທີຢູ່ ສປປ ລາວ ຍັງບໍ່ທັນຫຼາກຫຼາຍ, ສ່ວນຫຼາຍແມ່ນເຮັດທຸລະກິດທີ່ຄ້າຍຄືກັນ.

2). ໂຮງງານອຸດສາຫະກຳ ແລະ ຜູ້ປະກອບການທີ່ສາມາດແຂ່ງຂັນໃນລະດັບສາກົນ ແມ່ນຍັງບໍ່ມີ ຊຶ່ງເປັນສາເຫດເຮັດໃຫ້ບໍ່ມີສິນຄ້າ ຫຼື ຜະລິດ ຕະພັນໃນຕະຫຼາດເຕັກໂນໂລຊີດິຈິຕອນ ຂອງພາກພື້ນ ແລະ ສາກົນ. ພ້ອມກັນນັ້ນ, ຂະແໜງການຕ່າງໆ ທັງພາກລັດ ແລະ ເອກະຊົນ, ຕະຫຼອດຮອດທຸລະກິດຂະໜາດກາງ ແລະ ຂະໜາດນ້ອຍ ຍັງມີຄວາມຊັກຊ້າ ແລະ ຍັງບໍ່ສາມາດຮັບເອົາເຕັກໂນໂລຊີ ເພື່ອເພີ່ມປະສິດທິພາບ ຂອງການຜະລິດ ແລະ ການບໍລິການ; ຜູ້ຊົມໃຊ້ກໍ່ຄືປະຊາຊົນສ່ວນໃຫຍ່ຄວາມຮູ້ ແລະ ທັກສະໃນການນຳໃຊ້ເຕັກໂນໂລຊີດິຈິຕອນຍັງຈຳກັດ. ອີກດ້ານໜຶ່ງ, ຄວາມອາດສາມາດຊື້ສິນຄ້າ ແລະ ຜະລິດຕະພັນດິຈິຕອນຂອງປະຊາຊົນ ແມ່ນຍັງມີຈຳກັດ ຍ້ອນລາຄາຂ້ອນຂ້າງສູງ ເມື່ອທຽບກັບລາຍຮັບຂອງປະຊາຊົນ.

3). ການພັດທະນາຊັບພະຍາກອນມະນຸດທາງດ້ານໄອຊີທີ ເພື່ອຮອງຮັບການພັດທະນາເຕັກໂນໂລຊີທີ່ທັນສະໄໝ ຍັງບໍ່ທັນສາມາດເຮັດໄດ້ຕາມຄວາມຕ້ອງການ ທັງທາງດ້ານປະລິມານ ແລະ ຄຸນນະພາບ, ສ່ວນໃຫຍ່ຍັງອາໄສຊ່ຽວຊານ ຂອງຕ່າງປະເທດມາເປັນຜູ້ບຳລຸງຮັກສາ ຫຼື ບໍລິການແກ້ໄຂເຕັກໂນໂລຊີ ແລະ ຜະລິດຕະພັນທີ່ມີຄວາມກ້າວໜ້າ.

4).ໄພຄຸກຄາມທາງໄຊເບີນັບມື້ນັບຮຸນແຮງ ເຊິ່ງຮຽກຮ້ອງໃຫ້ຜູ້ປະກອບການ ແລະ ຜູ້ຊົມໃຊ້ຕ້ອງມີການລົງທຶນເພີ່ມ ອັນເປັນການລົງທຶນທີ່ບໍ່ສາມາດສ້າງລາຍຮັບໄດ້.

5). ການປ່ຽນແປງ ຂອງດິນຟ້າອາກາດ ແລະ ໄພທຳມະຊາດ ໂດຍສະເພາະແມ່ນບັນຫາໄພນ້ຳຖ້ວມ ໄດ້ສ້າງຜົນກະທົບຕໍ່ພື້ນຖານໂຄງລ່າງດ້ານໂທລະຄົມມະນາຄົມ ແລະ ໄອຊີທີ.

6). ການເກັບພາສີ-ອາກອນລາຍຮັບຈາກການນຳໃຊ້ເຕັກໂນໂລຊີດິຈິຕອນ (Digital Platform) ຍັງຈຳກັດ, ບໍ່ທັນມີເຄື່ອງມື (ນິຕິກຳ) ຫຼື ກົນໄກທີ່ມີປະສິດທິພາບໃນສ້າງລາຍຮັບຈາກການນຳໃຊ້ເຕັກໂນໂລຊີ ຢ່າງເຕັມທີ່.

7). ພູມສັນຖານ ຂອງປະເທດທີ່ມີພູເຂົາເປັນສ່ວນຫຼາຍ ເຮັດໃຫ້ມີຄວາມຫຍຸ້ງຍາກໃນການຂະຫຍາຍຕາໜ່າງຄົມມະນາຄົມ ໄປສູ່ຊຸມຊົນບົດ. ການຂະຫຍາຍການນຳໃຊ້ອິນເຕີເນັດ ລວມທັງອິນເຕີເນັດຄວາມໄວສູງ ແມ່ນຍັງບໍ່ສະໝ່ຳສະເໝີ ລະຫວ່າງ ຕົວເມືອງ ແລະ ຊຸມຊົນບົດ ເຮັດໃຫ້ຄວາມຕ້ອງການຂອງການນຳໃຊ້ເຕັກໂນໂລຊີທັນສະໄໝ ຢູ່ຊຸມຊົນບົດບໍ່ຫຼາຍ.

3. ທິດທາງ ແລະ ວິທີການພັດທະນາ ແລະ ນຳໃຊ້ເຕັກໂນໂລຊີ ເຂົ້າໃນການພັດທະນາ ສປປ ລາວ ໃນຕໍ່ໜ້າ.

3.1. ທິດທາງພັດທະນາ ແລະ ນຳໃຊ້ເຕັກໂນໂລຊີ ເຂົ້າໃນການ

ພັດທະນາ ສປປ ລາວ ໃນຕໍ່ໜ້າ.

ດ້ວຍຄວາມກ້າວໜ້າທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີ ຢູ່ໃນໂລກ, ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ປີ 2021 ໄດ້ຕີລາຄາວ່າ: ຄວາມກ້າວໜ້າອັນວ່ອງໄວ ແລະ ການນຳໃຊ້ຜົນສຳເລັດດ້ານເຕັກໂນໂລຊີ ແລະ ນະວັດຕະກຳ ໄດ້ກາຍເປັນທາງເລືອກລວມ ໃນການພັດທະນາຂອງປະຊາຊາດຕ່າງໆ ຊຶ່ງບົ່ງບອກໃຫ້ພວກເຮົາຮູ້ວ່າ ຍຸດທະສາດການພັດທະນາໃນອະນາຄົດຂອງປະເທດເຮົາ ຕ້ອງຕັ້ງຢູ່ບົນພື້ນຖານການນຳໃຊ້ຜົນສຳເລັດດ້ານວິທະຍາສາດ, ນະວັດຕະກຳຢ່າງກວ້າງຂວາງ ໂດຍຕິດພັນກັບການພັດທະນາຊັບພະຍາກອນມະນຸດ ທີ່ມີຄຸນນະພາບສູງ ໂດຍສະເພາະຂົງເຂດວິສະວະກຳ. ດ້ວຍເຫດນັ້ນ ຈຶ່ງມີຄວາມຈຳເປັນຢ່າງຍິ່ງ ທີ່ຈະຕ້ອງຫັນປ່ຽນຢ່າງແຂງແຮງຈາກສະພາວະທີ່ເປັນຢູ່ໃນປັດຈຸບັນ ໂດຍຕິດພັນກັບການປັບປຸງແຜນນະໂຍບາຍອັນເປັນພື້ນຖານກ່ຽວກັບການພັດທະນາຢ່າງເປັນລະບົບ, ຖືການຄົ້ນຄວ້າ, ເຜີຍແຜ່ ແລະ ນຳໃຊ້ຜົນສຳເລັດດ້ານວິທະຍາສາດ-ເຕັກໂນໂລຊີ ແລະ ນະວັດຕະກຳອັນເໝາະສົມ ເປັນມາດຕະຖານ ແລະ ເງື່ອນໄຂທີ່ຂາດບໍ່ໄດ້ໃນການກຳນົດແຜນຍຸດທະສາດພັດທະນາໃນຊຸມປີຕໍ່ໜ້າ.

ເພື່ອເຮັດໃຫ້ການຜັນຂະຫຍາຍແນວທາງຂອງພັກໃຫ້ປາກົດຜົນເປັນຈິງ, ສະຫາຍທອງລຸນ ສີສຸລິດ ເລຂາທິການໃຫຍ່, ປະທານປະເທດ ແຫ່ງ ສປປ ລາວ ໄດ້ໃຫ້ທິດຊີ້ນຳໃນກອງປະຊຸມລະດັບສູງ ກ່ຽວກັບການຫັນເປັນດິຈິຕອນຂອງ ສປປ ລາວ ໃນ ປີ 2022 ຄື:

1). ບຸກທະລຸທາງດ້ານຈິນຕະນາການ ເພື່ອສ້າງຄວາມສຳນຶກທີ່ເປັນເອກະພາບ ເສີມຂະຫຍາຍບົດບາດການນຳພາຂອງພັກ ແລະ ການຄຸ້ມຄອງລັດ, ສົ່ງເສີມການມີສ່ວນຮ່ວມທຸກອົງການຈັດຕັ້ງທາງດ້ານການເມືອງ-ສັງຄົມ, ປູກຈິດສຳນຶກໃຫ້ແກ່ຄະນະພັກ ແລະ ອຳນາດການປົກຄອງທຸກຂັ້ນ ເຫັນໄດ້ຄວາມສຳຄັນອັນຮີບດ່ວນ ແລະ ເຂົ້າຮ່ວມຢ່າງຕັ້ງໜ້າ ໃນການຫັນເປັນດິຈິຕອນ ໂດຍຖືວຽກງານດັ່ງກ່າວເປັນວຽກງານຈຸດສຸມເຊື່ອມໂຍງກັບບັນດາເປົ້າໝາຍ ຂອງການພັດທະ ນາເສດຖະກິດ-ສັງຄົມ, ການປົກປັກຮັກສາສິ່ງແວດລ້ອມ, ການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ຮັບປະກັນຄວາມປອດໄພດ້ານໄຊເບີ ຂອງທຸກຂະແໜງການ.

2). ສ້າງ ແລະ ປັບປຸງນິຕິກຳ ຂອງທຸກໆຂະແໜງການ ເພື່ອຮອງຮັບການຫັນເປັນດິຈິຕອນ ແລະ ສາມາດເຊື່ອມໂຍງກັບສາກົນຢ່າງເປັນເຈົ້າການ ເປັນຕົ້ນແມ່ນກົດໝາຍວ່າດ້ວຍວິສາຫະກິດ, ນະວັດ ຕະກຳ, ທຸລະກິດລິເລີ່ມ, ຊັບສິນທາງປັນຍາ, ການຄ້າ ແລະ ການລົງ ທຶນ ເພື່ອສ້າງເງື່ອນໄຂສະດວກໃຫ້ແກ່ການຫັນເປັນດິຈິຕອນ ຂອງປະ ເທດເຮົາໃຫ້ເກີດມີຜະລິດຕະພັນໃໝ່, ການບໍລິການໃໝ່ ແລະ ເສດຖະ ກິດແບບໃໝ່ທີ່ນຳໃຊ້ເຕັກໂນໂລຊີດິຈິຕອນ.

3). ເອົາໃຈໃສ່ພັດທະນາອຸດສາຫະກຳເຕັກໂນໂລຊີດິຈິຕອນ ເປັນບຸລິມະສິດ ແລະ ເປັນຈຸດສຸມ: ເພື່ອເຮັດໃຫ້ຂະແໜງການອຸດສາຫະກຳ, ການຜະລິດ ແລະ ການບໍລິການທີ່ເປັນອົງປະກອບສຳຄັນ ຂອງເສດຖະກິດປະເທດເຮົາ ໃຫ້ມີການຂະຫຍາຍຕົວຢ່າງແຂງແຮງ.

4). ຊຸກຍູ້ການຫັນເປັນດິຈິຕອນ ຢູ່ໃນບັນດາອົງການຈັດຕັ້ງພັກ, ລັດ ເພື່ອຍົກລະດັບການຄຸ້ມຄອງບໍລິຫານ ແລະບໍລິການຂອງບັນດາອົງການຈັດຕັ້ງຕ່າງໆໃຫ້ມີປະສິດທິພາບ ແລະ ມີປະສິດທິຜົນສູງ.

5). ເອົາໃຈໃສ່ສົ່ງເສີມ ແລະ ຂະຫຍາຍການຮ່ວມມືກັບບັນດາປະເທດເພື່ອນມິດຍຸດທະສາດ ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ: ເພື່ອຍາດແຍ່ງເອົາບົດຮຽນ, ຄວາມຮູ້ ແລະ ການລົງທຶນຈາກຕ່າງປະເທດ ມາພັດທະນາການຫັນເປັນດິຈິຕອນ ຂອງ ສປປ ລາວ.

ການຫັນເປັນດິຈິຕອນ ຕ້ອງດຳເນີນໄປຢ່າງເລິກເຊິ່ງ ໃນ 3 ດ້ານ ຢ່າງກົມກຽວກັນ ຄື: ສ້າງເສດຖະກິດດິຈິຕອນ, ສ້າງສັງຄົມດິຈິຕອນ ແລະ ສ້າງການບໍລິຫານລັດແບບດິຈິຕອນ ໂດຍຕິດພັນກັບການພັດທະນາຊັບພະຍາກອນມະນຸດທີ່ມີຄຸນນະພາບສູງ, ສ້າງພື້ນ ຖານໂຄງລ່າງ ICT ທີ່ທັນສະໄໝ, ປົກປັກຮັກສາສະພາບແວດລ້ອມ ແລະ ຮັບປະກັນຄວາມປອດໄພດ້ານໄຊເບີ ຢ່າງໜັກແໜ້ນ. ສົມທົບ ແໜ້ນລະຫວ່າງ ການປັບປຸງຍົກລະດັບບັນດາເງື່ອນໄຂ ແລະ ສິ່ງອຳນວຍຢູ່ພາຍໃນປະເທດ ກັບການຕັ້ງໜ້າຂົນຂວາຍຍາດແຍ່ງການຮ່ວມມື ແລະ ການລົງທຶນຈາກຕ່າງປະເທດ ເປັນຕົ້ນແມ່ນການຮ່ວມມືກັບບັນດາປະເທດເພື່ອນມິດຍຸດທະສາດ ແລະ ສືບຕໍ່ປະຕິບັດການເຊື່ອມຈອດ ແລະ ເຊື່ອມໂຍງສາກົນ ເພື່ອດຶງດູດເອົາທຶນຮອນ ແລະຖ່າຍທອດ ເຕັກນິກ-ເຕັກໂນໂລຊີທັນສະໄໝ ພ້ອມທັງຄວາມຮູ້ ແລະ ຜົນສຳເລັດໃໝ່ທາງດ້ານວິທະຍາສາດ-ເຕັກໂນໂລຊີ ແລະ ນະວັດຕະກຳຈາກຕ່າງປະເທດ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງປະເທດເຮົາ.

ປັດຈຸບັນ, ລັດຖະບານໄດ້ກຳນົດວິໄສທັດໃນການພັດທະນາເສດຖະກິດດິຈິຕອນແຫ່ງຊາດ ໄລຍະ 20 ປີ (2021-2024) ຄື: “ນຳໃຊ້ເຕັກໂນໂລຊີດິຈິຕອນ ເປັນເຄື່ອງມືສຳຄັນຂັບເຄື່ອນທຸກຂະແໜງການເພື່ອສ້າງເສດຖະກິດດິຈິຕອນ ແນໃສ່ປະກອບສ່ວນເຂົ້າໃນການດັດປັບໂຄງສ້າງເສດຖະກິດຂອງປະເທດໃຫ້ມີການຂະຫຍາຍຕົວຢ່າງເຂັ້ມແຂງ, ໝັ້ນທ່ຽງແລະຍືນຍົງ”. ໃນນັ້ນ, ເປົ້າໝາຍລວມແມ່ນເສີມຂະຫຍາຍປັດໄຈ ແລະ ທ່າແຮງບົ່ມຊ້ອນ ຂອງປະເທດເຮົາໂດຍນຳໃຊ້ເຕັກໂນໂລຊີດິຈິຕອນທີ່ເໝາະສົມ ໃຫ້ກາຍເປັນໂອກາດ, ເປັນກຳລັງ

ແຮງ ແລະ ເປັນພື້ນຖານການຜະລິດ ແລະ ການບໍລິການທີ່ເປັນປາຍແຫຼມ, ເປັນຫົວຈັກໃຫ້ແກ່ການເຕີບໂຕ ເພື່ອສ້າງພື້ນ ຖານເສດຖະກິດ-ສັງຄົມ ໃຫ້ມີຄວາມເຂັ້ມແຂງ ແລະ ເປັນເຈົ້າຕົນເອງ, ເພິ່ງຕົນເອງ ຢ່າງມີຄວາມປອດໄພເປັນກ້າວໆ ຕິດພັນກັບການ ພັດທະນາຊັບພະຍາກອນມະນຸດທີ່ມີຄຸນນະພາບສູງ ເພື່ອເປັນປັດໄຈ ສຳ ຄັນໃນການພັດທະນາເສດຖະກິດ-ສັງຄົມ ສືບຕໍ່ກະກຽມຄວາມ ພ້ອມຮອບດ້ານ ເພື່ອນຳເອົາປະເທດຊາດອອກຈາກສະຖານະພາບ ດ້ອຍພັດ ທະນາ ແລະ ກ້າວເດີນສູ່ຈຸດໝາຍສັງຄົມນິຍົມ.

ເພື່ອບັນລຸວິໄສທັດນັ້ນ ຈະຕ້ອງໄດ້ເອົາໃຈໃສ່ສູ້ຊົນຫັນເປັນ ທັນສະໄໝຢ່າງເປັນລະບົບ, ປັບປຸງການຊຳລະສະສາງ, ການເກັບ ລາຍຮັບ ແລະ ຄຸ້ມຄອງລາຍຈ່າຍງົບປະມານດ້ວຍລະບົບເອ ເລັກໂຕຼນິກ, ຄຸ້ມຄອງ ແລະ ນຳໃຊ້ທຸລະກິດຊັບສິນດິຈິຕອນ ໃຫ້ມີ ປະສິດທິຜົນ, ພັດທະ ນາການຄ້າເອເລັກໂຕຼນິກໃຫ້ເປັນຮູບປະທຳ, ຊຸກຍູ້, ສົ່ງເສີມທຸລະກິດຂະໜາດກາງ, ຂະໜາດນ້ອຍ ແລະ ທຸລະ ກິດລິເລີ່ມ (ສະຕາດອັບ) ໃຫ້ ນຳໃຊ້ເຕັກໂນໂລຊີດິຈິຕອນ ແລະ ຮັບປະກັນດ້ານຄວາມປອດໄພທາງໄຊເບີ. ສ້າງລະບົບຄຸ້ມຄອງ ເອກະສານ ແລະ ບຸກຄະລາກອນຂອງພາກລັດແບບດິຈິຕອນ ໃຫ້ ສຳເລັດຢູ່ທຸກກະຊວງ, ອົງການ ແລະ ທ້ອງຈ່າ ການແຂວງໃນທົ່ວ ປະເທດ, ຫັນການບໍລິການຂອງລັດ ຜ່ານລະບົບອອນລາຍໃຫ້ສູງ ຂຶ້ນ. ພັດທະນາໂຄງລ່າງພື້ນຖານດິຈິຕອນ, ສູນຂໍ້ມູນມະຫາສານ ແລະ ການເຊື່ອມຕໍ່ອິນເຕີເນັດຄວາມໄວສູງ, ຂະຫຍາຍສະ ຖານີ ຮັບ-ສົ່ງສັນຍານມືຖືລະບົບ 4G ແລະ 5G ໃຫ້ທົ່ວເຖິງ. ພ້ອມກັນ ນັ້ນ, ກ່ຳເອົາໃຈໃສ່ພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບ ສູງຂຶ້ນ ໃຫ້ສາມາດຕອບສະໜອງຄວາມຕ້ອງການ ຂອງການ ພັດທະນາ, ສ້າງແຮງງານດ້ານເຕັກໂນໂລຊີດິຈິຕອນ, ເຮັດໃຫ້ ເສດຖະກິດດິຈິຕອນ ສາມາດສ້າງລາຍຮັບ ປະກອບເຂົ້າໃນລວມ ຍອດຜະລິດຕະພັນພາຍໃນຂອງປະເທດໃຫ້ສູງຂຶ້ນ.

ພ້ອມກັນນັ້ນ, ກ່ຳເອົາໃຈໃສ່ສ້າງບາດກ້າວໃໝ່ດ້ວຍການນຳ ໃຊ້ເຕັກໂນໂລຊີດິຈິຕອນ ເຂົ້າໃນບັນດາຂະແໜງການຕົ້ນຕໍ ໃນການ ພັດ ທະນາເສດຖະກິດ-ສັງຄົມ ເພື່ອເຮັດໃຫ້ສປປລາວກາຍເປັນ ປະເທດກຳ ລັງພັດທະນາ ທີ່ມີລາຍຮັບປານກາງສູງຕາມເສດຖະກິດ ພູມປັນຍາ, ສີ ຂຽວ, ຍືນຍົງ ແລະ ປອດໄພ. ສ້າງພື້ນຖານໂທລະ ຄົມມະນາຄົມທີ່ເຂັ້ມ ແຂງ, ສ້າງລະບົບອິນເຕີເນັດຄວາມໄວສູງ ແລະ ຮັບປະກັນໃຫ້ສັນຍານມືຖືລະບົບ 5G ກວມເອົາ 100% ຂອງພື້ນທີ່ທົ່ວປະເທດ, ຫັນການບໍລິຫານ ແລະ ການບໍລິການຂອງ ລັດ ດ້ວຍລະບົບອອນລາຍໃຫ້ໄດ້ 100%. ດ້ານໜຶ່ງອີກ, ກ່ຳຊຸກຍູ້, ສົ່ງເສີມການນຳໃຊ້ເຕັກໂນໂລຊີດິຈິຕອນຢ່າງກວ້າງຂວາງໃນທົ່ວສັງຄົມ ເພື່ອເປັນເຄື່ອງມືສຳຄັນໃນການຂັບເຄື່ອນທຸກຂະແໜງການ ໃຫ້ມີການ ຂະຫຍາຍຕົວຢ່າງເຂັ້ມແຂງ,ຍືນຍົງ ແລະ ຮັບປະກັນຄວາມປອດໄພ ທາງໄຊເບີ. ສ້າງພື້ນຖານການຜະລິດ ແລະ ການບໍລິຫານແບບອັດສະ ລິຍະ, ສ້າງຕົວເມືອງອັດສະລິຍະ ແລະ ເຮັດໃຫ້ເສດຖະກິດດິຈິຕອນ ສ້າງລາຍຮັບມີສັດສ່ວນເພີ່ມຂຶ້ນ. ພັດທະນາຊັບພະຍາກອນມະນຸດ ໃຫ້ມີຄວາມຊ່ຽວຊານ ແລະ ສາມາດເປັນເຈົ້າເຕັກໂນໂລຊີດິຈິຕອນ, ສ້າງແຮງງານທີ່ມີທັກສະທາງດ້ານດິຈິຕອນໃຫ້ຫຼາຍຂຶ້ນ ເພື່ອຮອງຮັບ ຄວາມຮຽກຮ້ອງຕ້ອງການຂອງການຂະຫຍາຍຕົວທາງດ້ານ ເສດຖະກິດ-ສັງຄົມ.

3.2. ວິທີການພັດທະນາ ແລະ ນຳໃຊ້ເຕັກໂນໂລຊີ ເຂົ້າໃນ ການພັດທະນາ ສປປ ລາວ ໃນຕໍ່ໜ້າ.

ເພື່ອພັດທະນາ ແລະ ນຳໃຊ້ເຕັກໂນໂລຊີເຂົ້າໃນການພັດທະ ນາ ສປປ ລາວ ແບບຍືນຍົງໃນຕໍ່ໜ້າ ຄວນເອົາໃຈໃສ່ບາງດ້ານຄື:

1). ສ້າງ ແລະ ປັບປຸງນະໂຍບາຍ, ກົດໝາຍ ແລະ ນິຕິກຳ ອື່ນໆ. ເພື່ອນຳໃຊ້ເຕັກໂນໂລຊີຢ່າງມີປະສິດທິພາບ ແລະ ໄດ້ຮັບຜົນ ສູງສຸດ, ທັງເປັນການສະໜອງການບໍລິການດ້ານໄອຊີທີ ໃຫ້ມີການຄຸ້ມ ຄອງຮັດກຸມ, ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ຊົມໃຊ້, ຜູ້ໃຫ້ ບໍລິການ ກ່ໍຄືຜົນປະໂຫຍດຂອງປະເທດຊາດ ມີຄວາມຈຳເປັນຕ້ອງ ສ້າງ ແລະ ປັບປຸງນະໂຍບາຍ, ກົດໝາຍ ແລະ ລະບຽບໃນຂະ ແໜ ງການຕ່າງໆທີ່ກ່ຽວຂ້ອງ ໃຫ້ຮັດກຸມ, ພຽບພ້ອມ ແລະ ທັນກັບການ ປ່ຽນແປງແຕ່ລະໄລຍະ ແນໃສ່ຮັບປະກັນການຄຸ້ມຄອງຜົນປະ ໂຫຍດ ຂອງພັກ-ລັດ, ສິດ ແລະ ຜົນປະໂຫຍດຂອງຜູ້ປະກອບການ ແລະ ຜູ້ ຊົມໃຊ້ ເປັນຕົ້ນແມ່ນກົດໝາຍກ່ຽວກັບໄອຊີທີ, ການຊຳລະ, ການ ທຸລະກຳ, ການຄ້າ, ການປົກປ້ອງທາງເອເລັກໂຕຼນິກ ແລະ ຊັບ ພະຍາກອນໄອຊີທີ. ພ້ອມກັນນັ້ນ ກ່ຳສ້າງນະໂຍບາຍເພື່ອຊຸກຍູ້ການ ບໍລິການ ໂດຍການຫັນເປັນດິຈິຕອນ ເພື່ອໃຫ້ທຸກພາກສ່ວນຮ່ວມມື ຢ່າງເປັນຂະບວນການ, ທັງສ້າງນະໂຍບາຍອຳນວຍຄວາມສະດວກໃຫ້ ແກ່ພາກສ່ວນເອກະຊົນໃນການລົງທຶນໃສ່ວຽກງານໄອຊີທີ ຂອງຂະແ ໜງການຕ່າງໆ ຊຶ່ງຈະເປັນການຊຸກຍູ້ໃຫ້ການຫັນເປັນດິຈິຕອນເປັນວົງ ກວ້າງ ເປັນຕົ້ນ: ນະໂຍບາຍແຫ່ງຊາດດ້ານໄອຊີທີ, ນະໂຍ ບາຍແຫ່ງ ຊາດ ດ້ານອິນເຕີເນັດຄວາມໄວສູງ ແລະ ນະໂຍບາຍຄວາມປອດໄພ ທາງໄຊເບີ.

2). ປັບປຸງ ແລະ ຂະຫຍາຍພື້ນຖານໂຄງລ່າງເຕັກໂນໂລຊີໃຫ້ ທົ່ວເຖິງ ແລະ ທັນສະໄໝ. ລັດຖະບານ ຕ້ອງເອົາໃຈໃສ່ພັດທະນາ ໂຄງລ່າງພື້ນຖານໃຫ້ກວ້າງຂວາງທົ່ວເຖິງ, ທັນສະໄໝ ແລະ ມີຄຸນ

ນະພາບ, ສາມາດນຳໃຊ້ພື້ນຖານໂຄ່ງລ່າງຮ່ວມກັນ ໄດ້ຢ່າງມີປະສິດທິພາບສູງສຸດ ແລະ ຮັບປະກັນໃຫ້ບໍລິການຢ່າງຕໍ່ເນື່ອງ ໃນລາຄາທີ່ຊຶມໃຊ້ໄດ້ ຮອງຮັບກັບກິດຈະກຳທາງເສດຖະກິດ ເພື່ອໃຫ້ພາກທຸລະກິດພາຍໃນ ສາມາດແຂ່ງຂັນໄດ້ໃນລະດັບພາກພື້ນ ແລະ ສາກົນ. ໃນນັ້ນ, ເອົາໃຈ ໃສ່ພັດທະນາພື້ນຖານໂຄງລ່າງໂທລະຄົມມະນາຄົມ ແລະ ອິນເຕີເນັດຄວາມໄວສູງໃຫ້ຄອບຄຸມພື້ນທີ່ທົ່ວປະເທດເປັນສູນກາງດ້ານດິຈິຕອນ, ເຊື່ອມໂຍງພາກພື້ນ ແລະ ສາກົນ ເພື່ອຊຸກຍູ້ໃຫ້ການຫັນເປັນທັນສະ ໄໝ ແລະ ຍູ້ໃຫ້ເສດຖະກິດດິຈິຕອນ ມີການພັດທະນາ ແລະ ຂະຫຍາຍຕົວໄວຂຶ້ນ.

3). ສ້າງລະບົບຊຳລະດ້ວຍເຕັກໂນໂລຊີດິຈິຕອນ. ຕ້ອງ ເອົາໃຈ ໃສ່ພັດທະນາພື້ນຖານໂຄງລ່າງດ້ານການຊຳລະ, ລະບົບການ ຊຳລະ ແລະ ການໃຫ້ບໍລິການຊຳລະໃຫ້ໄດ້ມາດຕະຖານ ສາມາດ ເຊື່ອມກັນໄດ້ທັງພາຍໃນ, ພາກພື້ນ ແລະ ສາກົນ, ຊຸກຍູ້ ແລະ ຮອງ ຮັບການຂະ ຫຍາຍຕົວ ຂອງເສດຖະກິດດິຈິຕອນ, ປະກອບສ່ວນ ເຂົ້າໃນການປະຕິບັດນະໂຍບາຍເງິນຕາ ແລະ ຮັກສາສະຖຽນລະ ພາບທາງດ້ານການເງິນໃຫ້ໝັ້ນທ່ຽງ ແນໃສ່ເຮັດໃຫ້ປະຊາຊົນລາວ ໄດ້ໃຊ້ບໍລິການທີ່ສະ ດວກ, ວ່ອງໄວ, ທັນສະໄໝ, ປອດໄພ ແລະ ຕົ້ນທຶນຕ່ຳ. ໃນນັ້ນຕ້ອງເອົາໃຈໃສ່ສ້າງຖານລະບົບ (Platform) ເພື່ອໃຫ້ຮອງຮັບໃຫ້ເກີດທຸລະກຳ ແລະ ການແລກປ່ຽນຂໍ້ມູນເຊິ່ງ ກັນແລະກັນ ໃນຮູບແບບອອນລາຍ ເພື່ອສົ່ງເສີມວຽກງານການ ບໍລິຫານລັດ, ການຄ້າ, ການຊຳລະ ແລະ ການທະນາຄານໃນຮູບ ແບບດິຈິຕອນທົ່ວປະເທດ ແລະ ກັບສາກົນ.

4). ພັດທະນາຜະລິດຕະພັນ ແລະ ການບໍລິການດິຈິຕອນ ພາຍໃນປະເທດ ສຳລັບການຄຸ້ມຄອງຂອງພາກລັດ ແລະ ທົ່ວສັງຄົມ ເພື່ອຫຼຸດຜ່ອນການນຳເຂົ້າເຕັກໂນໂລຊີຈາກຕ່າງປະເທດ ແລະ ສ້າງ ໂອກາດໃຫ້ ສປປ ລາວ ສາມາດສົ່ງອອກຜະລິດຕະພັນດິຈິຕອນ ແລະ ໃຫ້ບໍລິການດິຈິຕອນໃນພາກພື້ນ ແລະ ສາກົນ ຊຶ່ງຈະສ້າງ ສະພາບແວດລ້ອມສະໜັບສະໜູນການຜະລິດ, ບໍລິການເຕັກໂນໂລ ຊີ ແລະ ນະວັດຕະກຳດິຈິຕອນ.

5). ພັດທະນາດ້ານຄວາມປອດໄພເຕັກໂນໂລຊີດິຈິຕອນ ເພື່ອສ້າງຄວາມໝັ້ນໃຈໃຫ້ແກ່ພາກລັດ, ເອກະຊົນ ແລະ ສັງຄົມໃນ ການນຳໃຊ້ ແລະ ການຫັນເປັນດິຈິຕອນ ໂດຍເອົາໃຈໃສ່ພັດທະນາ ລະບົບຄວາມປອດໄພ, ສ້າງມາດຕະຖານ, ໂຄງສ້າງ ແລະ ຄຳແນະ ນຳທາງໄຊເບີ ໃຫ້ແກ່ສັງຄົມ.

6). ພັດທະນາຊັບພະຍາກອນມະນຸດດ້ານເຕັກໂນໂລຊີໃຫ້ ຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ. ສປປ ລາວ ຕ້ອງ ພັດ ທະນາກຳລັງຊັບພະຍາກອນມະນຸດ ເພື່ອຮອງຮັບການ ຂະຫຍາຍຕົວຂອງເຕັກໂນໂລຊີ ເປັນຕົ້ນພັດທະນາພະນັກງານ-ລັດຖະກອນແຕ່ຂັ້ນສູນກາງ ຮອດທ້ອງຖິ່ນ ໃຫ້ສາມາດນຳໃຊ້ລະບົບຂໍ້ ມູນຂ່າວສານ ແລະ ປັບປຸງບຸກຄະລາກອນ ໃຫ້ຮູ້ຈັກນຳໃຊ້ລະບົບ ບໍລິຫານລັດແບບດິຈິຕອນ. ຂະແໜງການຕ່າງໆທີ່ກ່ຽວຂ້ອງ ສົມທົບ ກັບກະຊວງເຕັກໂນໂລຊີ ແລະ ການສື່ສານ; ຂະແໜງການສຶກສາສຸມ ໃສ່ປັບປຸງຫຼັກສູດພັດທະນາພະນັກງານ-ລັດຖະກອນ ແລະ ສ້າງ ມາດຕະຖານດ້ານຄວາມຮູ້ເຕັກໂນໂລຊີ ໃຫ້ກວ້າງຂວາງທົ່ວເຖິງ. ພ້ອມກັນນັ້ນ ກໍ່ສົ່ງເສີມ, ສະໜັບສະໜູນໃຫ້ບັນດາບໍລິສັດເອກະຊົນ ພັດທະນາກຳ ລັງແຮງງານໃນອົງການ-ໜ່ວຍງານ ໃຫ້ມີທັກສະດ້ານ ເຕັກໂນໂລຊີທີ່ທັນສະໄໝ. ນອກຈາກນັ້ນ, ຕ້ອງສ້າງ ແລະ ປັບປຸງນະ ໂຍບາຍ, ກົນໄກ ເພື່ອດຶງດູດ ແລະ ອຳນວຍຄວາມສະດວກໃນການເຂົ້າ ມາເຮັດວຽກ ຂອງບັນດາຊ່ຽວຊານ ແລະ ນັກວິຊາການ ທີ່ມີຄວາມຮູ້ ຄວາມສາມາດ ແລະ ຄວາມຊຳນານງານດ້ານເຕັກໂນໂລຊີ ແລະ ນະ ວັດຕະກຳທີ່ທັນສະໄໝ ເພື່ອພັດທະນາ ສປປ ລາວ.

ສັງລວມແລ້ວ, ການນຳໃຊ້ເຕັກໂນໂລຊີເຂົ້າໃນການພັດທະ ນາ ປະເທດ ມີຄວາມສຳຄັນ ແລະ ຈຳເປັນທີ່ສຸດ, ໂດຍສະເພາະເຕັກໂນ ໂລຊີດິຈິຕອນ ນັບມື້ມີບົດບາດສຳຄັນຕໍ່ການດຳລົງຊີວິດ ຂອງຄົນເຮົາ ກໍ່ຄືການພັດທະນາປະເທດຊາດ ຊຶ່ງມັນໄດ້ສ້າງທັງການະໂອກາດ ແລະ ສິ່ງທ້າທາຍຫຼາຍປະການ. ຕະຫຼອດໄລຍະຜ່ານມາ, ພັກ ແລະ ລັດຖະບານ ໄດ້ເອົາໃຈໃສ່ພັດທະນາເຕັກໂນໂລຊີຢ່າງຕໍ່ເນື່ອງ ເພື່ອຮັບ ໃຊ້ໃຫ້ແກ່ການພັດທະນາ ເຮັດໃຫ້ເຕັກໂນໂລຊີນັບມື້ໄດ້ຮັບການ ພັດທະນາຢ່າງຕໍ່ເນື່ອງ. ເຖິງວ່າມີຜົນສຳເລັດຫຼາຍດ້ານກໍ່ຕາມ, ກໍ່ຍັງມີ ສິ່ງທ້າທາຍຫຼາຍປະການ ເປັນຕົ້ນ: ລະດັບການຫັນເປັນດິຈິຕອນ ຂອງ ສປປ ລາວ ຍັງບໍ່ທັນສູງ, ການສ້າງສະພາບແວດລ້ອມໃນການລົງທຶນ ດ້ານໄອຊີທີ ຍັງບໍ່ທັນເປັນທີ່ສົນໃຈຂອງນັກລົງທຶນຕ່າງປະ ເທດ, ຮູບ ແບບຜູ້ປະກອບການໄອຊີທີຢູ່ ສປປ ລາວ ຍັງບໍ່ທັນຫຼາກຫຼາຍ ສ່ວນ ຫຼາຍແມ່ນເຮັດທຸລະກິດທີ່ຄ້າຍຄືກັນ. ພ້ອມກັນນັ້ນ, ການພັດທະນາ ຊັບພະຍາກອນມະນຸດທາງດ້ານໄອຊີທີ ເພື່ອຮອງຮັບການພັດທະນາ ເຕັກໂນໂລຊີທີ່ທັນສະໄໝ ຍັງບໍ່ທັນສາມາດເຮັດໄດ້ຕາມຄວາມ ຕ້ອງການ ທັງທາງດ້ານປະລິມານ ແລະ ຄຸນນະພາບ. ສ່ວນໃຫຍ່ຍັງ ອາໄສຊ່ຽວຊານ ຂອງຕ່າງປະເທດ ມາເປັນຜູ້ບຳລຸງຮັກ ສາ ຫຼື ບໍລິການ ແກ້ໄຂເຕັກໂນໂລຊີ ແລະ ຜະລິດຕະພັນທີ່ມີຄວາມກ້າວໜ້າ.

ເພື່ອພັດທະນາເຕັກໂນໂລຊີນຳໃຊ້ເຂົ້າໃນການພັດທະນາ ສປປ ລາວ ໃນຕໍ່ໜ້າໃຫ້ມີຜົນສຳເລັດ, ຈະຕ້ອງເອົາໃຈໃສ່ບາງດ້ານສຳຄັນຄື ກ່ອນອື່ນໝົດ, ຕ້ອງສ້າງ ແລະປັບປຸງນະໂຍບາຍ, ກົດໝາຍ ແລະ ນິຕິ

ກຳ ໃຫ້ເປັນລະບົບຄົບຊຸດ; ປັບປຸງ ແລະ ຂະຫຍາຍພື້ນຖານໂຄງ ລ່າງເຕັກໂນໂລຊີ ໃຫ້ທົ່ວເຖິງ ແລະ ທັນສະໄໝ. ພ້ອມກັນນັ້ນ, ພັດທະນາຊັບພະຍາກອນມະນຸດດ້ານເຕັກໂນໂລຊີ ໃຫ້ຮັບປະກັນ ທາງດ້ານປະລິມານ ແລະ ຄຸນນະພາບ ເພື່ອຮອງຮັບການ ຂະຫຍາຍຕົວ ຂອງເຕັກໂນໂລຊີ.

ເອກະສານອ້າງອີງ

ກະຊວງເຕັກໂນໂລຊີ ແລະ ການສື່ສານ. (2021). *ວິໄສທັດການ ພັດທະນາເສດຖະກິດດິຈິຕອນແຫ່ງຊາດ ໄລຍະ 20 ປີ (2021-2040), ຍຸດທະສາດການພັດທະນາເສດຖະກິດດິຈິ ຕອນແຫ່ງຊາດ ໄລຍະ 10 ປີ (2021-2030), ແຜນ ພັດທະນາເສດຖະກິດດິຈິຕອນແຫ່ງຊາດ ໄລຍະ 5 ປີ (2021-2025).*

ກະຊວງເຕັກໂນໂລຊີ ແລະ ການສື່ສານ. (2021). *ຮ່າງທີ 1 ແຜນ ພັດທະນາເຕັກໂນໂລຊີ ແລະ ການສື່ສານ 5 ປີ ຄັ້ງທີ IV (2026-2030).*

ກະຊວງແຜນການ ແລະ ການລົງທຶນ. (ປີ 2021). *ແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX (2021-2025).*

ສະພາທິດສະດີສູນກາງພັກ. (2023). *ເອກະສານສຳມະນາທິດສະດີ ລະຫວ່າງ ພັກປະຊາຊົນປະຕິວັດລາວ ແລະ ພັກກອມມູນິດ ຈີນ ຄັ້ງທີ X.*

ສີສຸລິດ, ທ. (2022). ເລຂາທິການໃຫຍ່, ປະທານປະເທດ ແຫ່ງ ສປປ ລາວ, *ບົດໂອ້ລົມຕໍ່ກອງປະຊຸມສຳມະນາພະນັກງານ ການນຳລະດັບສູງ ກ່ຽວກັບການຫັນເປັນດິຈິຕອນ ຂອງ ສປປ ລາວ.*

ວາລະສານ ອາລຸນໃໝ່. (2021). *ເອກະສານກອງປະຊຸມໃຫຍ່ ຄັ້ງ ທີ XI ພັກປະຊາຊົນປະຕິວັດລາວ.*

University of California. (2025, 24th June). *Perspectives is devoted to the study of global patterns and developments across a wide range of topics and fields.* Retrieved from https://online.ucpress.edu/gp/ article/2/1/27353/118411/How-Is-Technology-Changing-the-World-and-How.